ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ: 062

ສູນກາງສະຫະພັນແມ່ຍິງລາວ

ນະຄອນຫຼວງວຽງຈັນ, ວັນທີ 05 FEB 2008

# ກົດລະບຽບ

## ວ່າດ້ວຍການສ້າງເຂດປອດຄວັນຢາສູບ

## ຂອງສະຫະພັນແມ່ຍິງລາວ

**Rule on**
**Smoke Free Lao Women Union**

------------

- ອີງຕາມ ໃຫ້ສັດຕະຍະບັນຂອງ ລັດຖະບານແຫ່ງ ສປປ ລາວກ່ຽວກັບສົນທິສັນຍາສາກົນ ວ່າດ້ວຍການຄວບຄຸມຢາສູບ ໃນວັນທີ 5 ກັນຍາ2006.
- ອີງໃສ່ນະໂຍບາຍວ່າດ້ວຍການຄວບຄຸມຢາສູບຢູ່ສປປລາວ ໃນປີ 2001 ແລະຄຳສັ່ງຂອງ ລັດຖະມົນຕີວ່າການກະຊວງສາທາລະນະສຸກສະບັບເລກທີ່ 385/ ກຊສ, ລົງວັນທີ 21 ມີນາ 2007 ວ່າດ້ວຍການສ້າງໃຫ້ສະຖານທີ່ສາທາລະນະສຸກທັງໝົດ ປອດຄວັນຢາສູບ
- ອີງຕາມກອງປະຊຸມປຶກສາຫາລື ກ່ຽວກັບການຮັບຮອງເອົາກົດລະບຽບວ່າດ້ວຍ ການສ້າງ ເຂດປອດຄວນຢາສູບໃນສຳນັກງານສະຫະພັນແມ່ຍິງ ຄັ້ງວັນທີ 11/09/2007

ຄະນະ ປະທານສູນກາງສະຫະພັນແມ່ຍິງລາວ ອອກ

ກົດລະບຽບວ່າດ້ວຍການສ້າງເຂດປອດຄວັນຢາສູບຂອງສະຫະພັນແມ່ຍິງ ດັ່ງນີ້:

ມາດຕາ 1 : ຈຸດປະສົງ

1. ເຮັດໃຫ້ຫ້ອງການ,ຫ້ອງລຳຖ້າ,ຫ້ອງປະຊຸມຫ້ອງນ້ຳບໍລິເວນຂອບເຂດພາຍໃນສຳນັກງານ ສະຫະພັນແມ່ຍິງລາວ ປອດຈາກຄວັນຢາສູບ ແລະ ເຮັດໃຫ້ສະພາບແວດລ້ອມສະອາດ, ມີອາກາດສົດ ໃສ .
2. ເພື່ອເຮັດໃຫ້ສະຫະພັນແມ່ຍິງລາວກາຍເປັນແບບຢ່າງທີ່ດີໃຫ້ແກ່ອົງການຈັດຕັ້ງອື່ນໆ ໃນການສ້າງເຂດປອດຄວັນຢາສູບ.

ມາດຕາ 2 : ຄວາມສຳຄັນ ຂອງການສ້າງເຂດປອດຄວັນຢາສູບ

1. ການສ້າງສະຖານທີ່ຕ່າງໆໃຫ້ປອດຄວັນຢາສູບ 100% ເທົ່ານັ້ນຈຶ່ງສາມາດປົກປ້ອງສຸກ ຂະພາບຂອງພະນັກງານໃຫ້ຫຼີກເວັ້ນ ຈາກພະຍາດຮ້າຍແຮງ ທີ່ມາຈາກການສູດດົມເອົາ ຄວັນຢາສູບ
2. ສິ່ງແວດລ້ອມປອດຄວັນຢາສູບສາມາດຮັກສາສຸຂະພາບຂອງຄົນເຮົາໄດ້ໂດຍສະເພາະ ເດັກນ້ອຍ, ແມ່ຍິງ, ຊາວໜຸ່ມ ບໍ່ໃຫ້ມີແນວຄິດເລີ່ມສູບຢາ
3. ການສ້າງເຂດປອດຄວັນຢາສູບແມ່ນໃຊ້ຈ່າຍງົບປະມານພຽງເລັກນ້ອຍແຕ່ໄດ້ຮັບປະ ສິດທິຜົນສູງ
4. ການສ້າງເຂດປອດຄວັນຢາສູບຈະຊ່ວຍໃຫ້ຜູ້ຕ້ອງການເຊົາສູບຢາຕັດສິນໃຈງ່າຍຂຶ້ນທີ່ ຈະຫຼຸດຈຳນວນກອກຢາສູບໃນແຕ່ລະມື້ລົງຫຼືກ້າວໄປສູ່ການເຊົາສູບຢາໃນທີ່ສຸດ

5. ການສ້າງເຂດປອດຄວັນຢາສູບແມ່ນມີຜົນດີຕໍ່ສັງຄົມ ລວມໄປເຖິງຄອບຄົວທີ່ມີເດັກ ນ້ອຍອາໄສຢູ່. ຄົນບໍ່ສູບຢາສ່ວນໃຫ່ຍລວມທັງຜູ້ສູບຢາເອງແມ່ນປາດຖະໜາທີ່ຈະໄປໃນສະຖານທີ່ປອດຄວັນຢາສູບ

<u>ມາດຕາ 3 :</u> ຂອບເຂດການຈັດຕັ້ງປະຕິບັດ ສະຖານທີ່ປອດຄວັນຢາສູບ

ກົດລະບຽບສະບັບນີ້ມີຂອບເຂດການນໍາໃຊ້ສະເພາະ:

ສູນກາງສະຫະພັນແມ່ຍິງລາວ,

ສະຫະພັນແມ່ຍິງນະຄອນຫຼວງ

ສະຫະພັນແມ່ຍິງແຂວງ

ສະຫະພັນແມ່ຍິງເມືອງ 9 ຕົວເມືອງຄື: ເມືອງຈັນທະບູລີ, ເມືອງໄຊເສດຖາ, ສີສັດຕະນາກ, ເມືອງສີໂຄດຕະບອງ, ເມືອງໄຊທານີ, ເມືອງຫາດຊາຍຟອງ, ເມືອງປາກງື່ມ, ເມືອງສັງທອງ, ເມືອງນາຊາຍທອງ .

ສະຖານທີ່ປອດຄວັນຢາສູບຕອ້ງຂື້ນປ້າຍຕິດໃສ່ພ້ອມທັງກົດລະບຽບແລະປ້າຍຫ້າມສູບຢາ.

<u>ມາດຕາ 4 :</u> ບັນດາຂໍ້ຫ້າມ

1. ຫ້າມສູບຢາໃນສະຖານທີ່ ທີ່ກໍານົດໄວ້ເຊັ່ນ: ຫ້ອງການ, ຫ້ອງລໍຖ້າ, ຫ້ອງປະຊຸມ ແລະ ຫ້ອງນໍ້າ ພາຍໃນສໍານັກງານຫ້ອງການສະຫະພັນແມ່ຍິງລາວ
2. ຫ້າມຂາຍຢາສູບພາຍໃນຂອບເຂດຮົ້ວບໍລິເວນໃນສໍານັກງານຫ້ອງການສະຫະພັນແມ່ຍິງ
3. ຫ້າມຕິດປ້າຍໂຄສະນາຜະລິດຕະພັນຢາສູບຢູ່ໃນຫ້ອງການສະຫະພັນແມ່ຍິງ

<u>ມາດຕາ 5 :</u> ມາດຕະການຕໍ່ຜູ້ລະເມີດ

ບຸກຄົນໃດຫາກບໍ່ປະຕິບັດລະບຽບສະບັບນີ້ຈະໄດ້ຖືກກ່າວເຕືອນໂດຍກົງ ແລະ ຕໍານິສິ່ງຂ່າວໃນ ກອງປະຊຸມສ່ອງແສງປະຈໍາເດືອນ ພ້ອມທັງໃຫ້ການສຶກສາອົບຮົມ

<u>ມາດຕາ 6 :</u> ນະໂຍບາຍ ແລະ ຍ້ອງຍໍ

ສະຫະພັນແມ່ຍິງ ຫຼື ຂະແໜງການອື່ນໆ ປະຕິບັດກົດລະບຽບສະບັບນີ້ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ

<u>ມາດຕາ7:</u> ມອບໃຫ້ສະຫະພັນແມ່ຍິງແຕ່ລະຂັ້ນປະສານສົມທົບແລະຂໍທິດຊີ້ນໍາຈາກຄະນະນໍາຂອງຕົນເພື່ອຜັນຂະຫຍາຍແລະຈັດຕັ້ງປະຕິບັດກົດລະບຽບສະບັບນີ້ຢ່າງມີປະສິດທິຜົນ.

<u>ມາດຕາ 8 :</u> ກົດລະບຽບສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ປະກາດໃຊ້ເປັນຕົ້ນ ໄປ

ປະທານສູນກາງສະຫະພັນແມ່ຍິງລາວ